ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມ ທົບທວນ ແລະ ປະເມີນການຈັດຕັ້ງປະຕິບັດດຳລັດວ່າດ້ວຍການ ປົກປ້ອງເງິນຝາກ ແລະ ນິຕິກຳທີ່ກ່ຽວຂ້ອງ



ໃນຕອນເຊົ້າຂອງວັນທີ 21 ຕຸລາ 2024, ສຳນັກງານປົກປ້ອງເງິນຝາກ (ສປງ) ໄດ້ເປີດກອງປະຊຸມ ທົບທວນ ແລະ ປະເມີນການຈັດຕັ້ງປະຕິບັດດຳລັດວ່າດ້ວຍການປົກປ້ອງເງິນຝາກ ແລະ ນິຕິກຳທີ່ກ່ຽວຂ້ອງຂຶ້ນທີ່ໂຮງແຮມ ລາວພລາຊາ, ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເປັນປະທານ ຂອງທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ), ປະທານສະພາບໍລິຫານ ສປງ, ຫົວໜ້າຄະນະຮັບຜິດຊອບຄົ້ນຄວ້າສ້າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ, ມີຫົວໜ້າ ສປງ ພ້ອມດ້ວຍຄະນະ, ສະມາຊິກສະພາບໍລິຫານ ສປງ, ຜູ້ຕາງໜ້າຈາກບັນດາກົມຂອງ ທຫລ ແລະ ຄະນະອະນຸກຳມະການຄົ້ນຄວ້າສ້າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ, ສະມາຄົມທະນາຄານ, ສະມາຄົມການເງິນຈຸລະພາກລາວ, ຄະນະອຳນວຍການທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ເປັນສະມາຊິກ ສປງ ເຂົ້າຮ່ວມ 90 ທ່ານ.

ກອງປະຊຸມໃນຄັ້ງນີ້ ຈຸດປະສົງກໍເພື່ອທົບທວນ ແລະ ປະເມີນການຈັດຕັ້ງປະຕິບັດດຳລັດວ່າດ້ວຍການປົກປ້ອງເງິນຝາກ ແລະ ນິຕິກຳທີ່ກ່ຽວຂ້ອງ ເພື່ອເປັນແນວທາງໃຫ້ ສປງ ໃນການປັບປຸງ ແລະ ຄົ້ນຄວ້າຍົກລະດັບນິຕິກຳຈາກດຳລັດ ຂຶ້ນເປັນກົດໝາຍ. ພ້ອມນີ້, ທີ່ປະຊຸມຍັງໄດ້ຮັບຟັງທຸກຄຳເຫັນ ແລະ ຂໍ້ສະເໜີຕ່າງໆ ຈາກພາກສ່ວນທີ່ໄດ້ຮັບຜົນປະໂຫຍດ ຫຼື ກ່ຽວຂ້ອງກັບການຈັດຕັ້ງປະຕິບັດດຳລັດດັ່ງກ່າວ ເພື່ອເປັນຂໍ້ມູນພື້ນຖານໃຫ້ ສປງ ກໍຄືຄະນະຮັບຜິດຊອບຄົ້ນຄວ້າສ້າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ ນຳໄປຄົ້ນຄວ້າ ພິຈາລະນາປະກອບເຂົ້າໃນເນື້ອໃນຮ່າງກົດໝາຍດັ່ງກ່າວ ຊຶ່ງຕາມແຜນການແມ່ນຈະເລີ່ມຕົ້ນຮ່າງໃນຕົ້ນປີ 2025 ແລະ ຄາດວ່າຈະໃຫ້ສຳເລັດ

ໃນຕົ້ນປີ 2027. ເຖິງແມ່ນວ່າດຳລັດວ່າດ້ວຍການປົກປ້ອງເງິນຝາກ ແລະ ບັນດານິຕິກຳທີ່ກ່ຽວຂ້ອງ ໄດ້ເປັນເຄື່ອງມືທາງດ້ານນິຕິກຳທີ່ໜັກແໜ້ນ ໃຫ້ການຈັດຕັ້ງປະຕິບັດວຽກງານປົກປ້ອງເງິນຝາກ ໃນໄລຍະຜ່ານມາ ເຮັດໃຫ້ຫຼາຍດ້ານມີທ່ວງທ່າທີ່ຕັ້ງໜ້າ, ແຕ່ຄຽງຄູ່ກັນນັ້ນ ເຫັນວ່າ ມີບາງດ້ານ ຫຼື ບາງເນື້ອໃນຂອງນິຕິກຳເຫຼົ່ານັ້ນ ຍັງມີຂໍ້ຈຳກັດໃນການຈັດຕັ້ງປະຕິບັດ ແລະ ພັດທະນາວຽກງານປົກປ້ອງເງິນຝາກຂອງ ສປປ ລາວ ໃນໄລຍະໃໝ່ ໂດຍສະເພາະແມ່ນຄວາມສອດຄ່ອງກັບຫຼັກການຂອງສາກົນ. ສະນັ້ນ, ສປງ ຈະສືບຕໍ່ປັບປຸງ ແລະ ແກ້ໄຂບັນດາຂໍ້ຄົງຄ້າງ-ສິ່ງທ້າທາຍຕ່າງໆ ເພື່ອຍົກສູງພາລະບົດບາດຂອງ ສປງ ໃຫ້ໃກ້ຄຽງກັບອົງການປົກປ້ອງເງິນຝາກ ຂອງບັນດາປະເທດໃນພາກພື້ນ ແລະ ສາກົນ ໂດຍສະເພາະແມ່ນ ການມີສ່ວນຮ່ວມໃນຕາໜ່າງຄວາມປອດໄພຂອງຂະແໜງການເງິນ ແລະ ສູ້ຊົນສ້າງກົດໝາຍວ່າດ້ວຍການປົກປ້ອງເງິນຝາກ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.






ກອງປະຊຸມດັ່ງກ່າວ ໄດ້ດຳເນີນໄປເປັນເວລາເຄິ່ງວັນ, ພ້ອມທັງໄດ້ແລກປ່ຽນຄຳຄິດຄຳເຫັນຮ່ວມກັນ ດ້ວຍບັນຍາກາດທີ່ຟົດຟື້ນ ແລະ ເຕັມໄປດ້ວຍເນື້ອໃນທີ່ເລິກເຊິ່ງ ຊຶ່ງເຮັດໃຫ້ກອງປະຊຸມໃນຄັ້ງນີ້ ບັນລຸຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ເປັນຢ່າງດີ.

**ຂ່າວ-ພາບ: ສຳນັກງານປົກປ້ອງເງິນຝາກ**

*ຢູ່ເມືອງລາວ ໃຊ້ເງິນກີບລາວ*